


<u>What is LAA</u>?

LAA, the Lao-American Association, is a private cultural and educational organization registered with the Lao government. It is a binational center of the sort found in many countries around the world. In the case of Laos, this means that it enjoys the support of members of both Lao and American communities, who may join as regular members. In addition, persons representing other nationalities may join as associate members. LAA was founded in Vientiane in 1956. It moved into its present home on Rue Setthathirath in 1969.

<u>What does LAA do</u>?

LAA's best known activity is English teaching. At present, about 1800 students are enrolled in more than 90 different English-language classes taught in the LAA building in Vientiane. There are another 500 students enrolled in classes LAA teaches elsewhere in Vientiane. Finally, about 450 students are now enrolled in classes taught at the LAA branch in Luang Prabang.

<u>What else does LAA do</u>?

LAA provides frequent social and cultural activities for its students and members. Exhibitions, lectures, film shows, athletic competitions, dances and other events are scheduled regularly and announced in a monthly activities bulletin. LAA publishes a magazine, <u>Friendship</u>, which is distributed six times a year to members and students.

<u>Who runs LAA</u>?

LAA is run by its members, who meet once yearly. Each year, the LAA membership elects a board of directors which consists of six Lao and six American members. The board of directors elects its officers and meets monthly to review administration and consider questions of policy. Day-today operation of LAA is handled by an administrative staff.

<u>How is LAA supported</u>?

LAA derives the major portion of its income from its English-teaching activities. Some income comes from membership dues, activities, contributions, and grants from the Lao and American governments and from private organizations.

<u>How do I join</u>?

Send a completed membership application form and one year's annual dues to LAA, Rue Setthathirath, Vientiane or BP No. 328. Annual dues are 600 kip for regular or associate members and 200 kip for students. As soon as the board of directors approves your membership, you will begin receiving activities notices and <u>Friendship</u> magazine.

# ຮູ້ຈັກກັບ ສລອ



## ສ.ລ.ອ. ແມ່ນຫຍັງ?

ສ.ລ.ອ. ຫຼື ສະມາຄົມລາວ-ອະເມຣິກັນ ເປັນສະຖາບັນການສຶກສາ ແລະ ວັທນະທັມເອກຊົນ ໂດຍມີທະບຽນຖືກຕ້ອງຕາມກົດໝາຍລາວ. ສະຖາບັນດັ່ງກ່າວເປັນສູນກາງລະຫວ່າງສອງຊາດອັນຄ້າຍຄືກັນກັບສູນແຫ່ງອື່ນໆໃນຫຼາຍປະເທດທົ່ວໂລກ. ສະເພາະໃນເມືອງລາວ ສູນກາງອັນນັ້ນຂຶ້ນຍ້ອນຄວາມເຫັນດີຂອງປະຊາຊົນລາວ ແລະ ອະເມຣິກັນ ຊຶ່ງເຂົ້າມາຮ່ວມໂດຍການເປັນສະມາຊິກສາມັນ. ນອກຈາກນັ້ນ ຄົນສັນຊາດອື່ນກໍ່ອາດເຂົ້າມາຮ່ວມໄດ້ໂດຍການເປັນສະມາຊິກສົມພັນ. ສ.ລ.ອ. ໄດ້ຖືກຈັດຂຶ້ນເປັນຄັ້ງແຣກເມື່ອປີ ໑໙໕໖ ແລະ ໄດ້ຍ້າຍເຂົ້າມາຢູ່ອາຄານຫຼັງປະຈຸບັນ ຊຶ່ງຕັ້ງຢູ່ຖນົນເຊດຖາທິຣາດເມື່ອປີ ໑໙໖໙.

(ລຸ່ມ) ນັກຮຽນ ສ.ລ.ອ. ໃນພິທີແຈກໃບປະກາສນີຍະບັດຈົບຫຼັກສູດພິເສດພາກຣະດູຮ້ອນ

(Below) LAA students attending a special summer course graduation.

(ຂວາ) ການເຕັ້ນລຳປະຈຳເດືອນເປັນລາຍການນິຍົມດີທີ່ ສ.ລ.ອ.

(Right) Monthly dances are popular events at LAA.



## ກິຈກັມຂອງ ສ.ລ.ອ. ມີຫຍັງແດ່?

ວຽກການອັນໄດ້ທຳໃຫ້ ສ.ລ.ອ. ເປັນທີ່ຮູ້ຈັກກັນທົ່ວໄປກໍຄືການສອນພາສາອັງກິດ. ໃນປະຈຸບັນອາຄານ ສ.ລ.ອ. ວຽງຈັນໄດ້ຮັບເອົານັກຮຽນເຂົ້າຮຽນເຖິງ ໑.໘໐໐ ຄົນ ໃນຈຳນວນຫ້ອງຮຽນທັງໝົດ ໙໐ ຫ້ອງຕ່າງໆກັນ. ນອກນັ້ນ ຍັງມີນັກຮຽນອີກປະມານ ໔໐໐ ຄົນທີ່ທາງ ສ.ລ.ອ. ໄດ້ສອນໃຫ້ຢູ່ບ່ອນອື່ນໃນນະຄອນວຽງຈັນ. ທີ່ສາຂາ ສ.ລ.ອ. ຫຼວງພຣະບາງກໍມີນັກຮຽນຢູ່ປະມານ ໔໕໐ ຄົນ.

## ນອກນັ້ນ ສ.ລ.ອ. ຍັງໄດ້ເຮັດຫຍັງອີກແດ່?

ສຳລັບກິຈກັມດ້ານສັງສັນສັງຄົມ ແລະ ວັທນະທັມສຳລັບນັກຮຽນ ແລະ ສະມາຊິກກໍໄດ້ຖືກຈັດຂຶ້ນໂດຍທາງ ສ.ລ.ອ. ເລື້ອຍມາ. ການສະແດງນິທັສກັມຕ່າງໆ ການບັນຍາຍ ການສາຍພາພົຍນ ແລະ ລາຍການອື່ນໆກໍ່ເຊັ່ນດຽວກັນ ໄດ້ຖືກຂຶ້ນສມ່ຳສເມີ ແລະ ໄດ້ປະກາດໃຫ້ຊາບທົ່ວໄປໃນໜ້າປະຕິທິນລາຍການກິຈກັມປະຈຳເດືອນ. ອີກຢ່າງນຶ່ງກໍຄືວາຣະສານ<u>ມິຕພາບ</u> ຊຶ່ງທາງ ສ.ລ.ອ. ໄດ້ພິມຂຶ້ນ ເພື່ອແຈກໃຫ້ສະມາຊິກ ແລະ ນັກຮຽນປີລະຫົກສະບັບ.



## ແມ່ນໃຜເປັນຜູ້ດຳເນີນວຽກການຂອງ ສ.ລ.ອ.?

ແມ່ນສະມາຊິກ ສ.ລ.ອ. ເອງເປັນຜູ້ດຳເນີນວຽກການ ຊຶ່ງສະມາຊິກດັ່ງກ່າວໄດ້ມີປະຊຸມກັນຂຶ້ນປີລະເທື່ອ. ທຸກໆປີທາງສະມາຊິກທັງຫຼາຍຈະພາກັນເລືອກຕັ້ງເອົາຄນະກັມມະການບໍຣິຫານຂຶ້ນມາຊຸດນຶ່ງ ຊຶ່ງປະກອບດ້ວຍຄົນລາວຫົກທ່ານ ແລະ ຄົນອະເມຣິກັນຫົກທ່ານ. ຫຼັງຈາກນັ້ນຄນະກັມມະການຈະພາກັນຄັດເລືອກເອົາເຈົ້າໜ້າທີ່ຂອງຕົນຂຶ້ນ ແລ້ວກໍມີການປະຊຸມກັນເດືອນລະເທື່ອເລື້ອຍໄປ ເພື່ອທົບທວນວຽກການກ່ຽວກັບການປົກຄອງ ແລະ ພິຈາຣະນາຂໍ້ສເນີນະໂຍບາຍຕ່າງໆ. ການດຳເນີນວຽກການປະຈຳວັນໄດ້ແກ່ຄນະປົກຄອງປະຈຳຫ້ອງການ.

(ລຸ່ມ) ສ.ລ.ອ. ເປັນເຈົ້າພາບໃນການໂຮມຂ່າວການເລືອກຕັ້ງປະທານາທິບໍດີອະເມຣິກັນ

(Below) LAA hosts a coverage of an American Presidential Election.

(ຂວາ) ຜູ້ຮຽນສຳເຣັດຕາມຫຼັກສູດການສອນພາສາອັງກິດຂອງ ສ.ລ.ອ.

(Right) Graduates of the LAA English-teaching program.



## ສ.ລ.ອ. ຄົງຕົວຢູ່ໄດ້ຢ່າງໃດ?

ລາຍໄດ້ສ່ວນໃຫຍ່ຂອງ ສ.ລ.ອ. ຂຶ້ນຢູ່ກັບກິຈກັມດ້ານການສອນພາສາອັງກິດ. ລາຍໄດ້ບາງຢ່າງກໍ່ແມ່ນມາຈາກຄ່າສະມາຊິກ ລາຍການຕ່າງໆ ການເອື້ອເຟື້ອຕ່າງໆ ແລະ ເງິນກອນທຶນທີ່ມາຈາກທັງຣັຖບານລາວ ແລະ ຣັຖບານອະເມຣິກັນ ຮວມທັງອົງການເອກຊົນອີກດ້ວຍ.

## ຈະເຂົ້າມາເປັນສະມາຊິກໄດ້ວິທີໃດ?

ພຽງແຕ່ຕື່ມຂໍ້ຄວາມລົງໃສ່ໃບສມັກ ແລ້ວສົ່ງມາຍັງ ສ.ລ.ອ. ທີ່ຖນົນເຊດຖາທິຣາດວຽງຈັນ ຫຼື ຕູ້ ປ.ນ. ໓໔໙ ພ້ອມກັບເງິນຄ່າສະມາຊິກເທົ່ານັ້ນ. ສຳລັບສະມາຊິກສາມັນ ແລະ ສະມາຊິກສົມພັນ ຄ່າທັມນຽມແມ່ນ ໘໐໐ ກີບ ສ່ວນນັກຮຽນແມ່ນ ໔໐໐ ກີບ. ຫຼັງຈາກຄະນະກັມມະການໄດ້ຮັບຮອງເອົາສະມາຊິກພາບຂອງທ່ານແລ້ວ ທ່ານກໍ່ຈະໄດ້ຮັບຂ່າວກ່ຽວກັບລາຍການກິຈກັມພ້ອມກັບວາຣະສານ <u>ມິຕພາບ</u> ທັນທີໂລດ.

